**Registrar Corp**

144 Research Drive, Hampton, Virginia 23666 USA

Phone: +1-757-224-0177, Fax: +1-757-224-0179, E-mail: info@registrarcorp.com, Website: www.registrarcorp.com

---

20 ມິຖຸນາ 2016

ສະຖານເອກອັກຄະລັດຖະທູດລາວ

2222 S St. NW

Washington, DC 20008

ບໍລິສັດ Registrar Corp ໃຫ້ຄວາມຊ່ວຍເຫຼືອແກ່ຜູ້ຜະລິດ ແລະ ຜູ້ສົ່ງອອກຂອງ ສປປ ລາວ ເພື່ອປະຕິບັດລະບຽບຂອງ ອົງການຄຸ້ມຄອງອາຫານ ແລະ ຢາ ຂອງ ສະຫະລັດ ອາເມລິກາ. ເນື່ອງຈາກວ່າ ບໍລິສັດຢູ່ ສປປ ລາວ ຕິດຕໍ່ຂໍຄວາມຊ່ວຍເຫຼືອຈາກທ່ານ ກ່ຽວກັບ ຂໍ້ກຳນົດຂອງອົງການຄຸ້ມຄອງອາຫານ ແລະ ຢາ, ພວກເຮົາຈຶ່ງຂໍແຈ້ງມາຍັງທ່ານຊາບວ່າ ມີລະບຽບການຈຳນວນໜຶ່ງ ທີ່ຈະຖືກນຳໃຊ້ ຕໍ່ກັບ ການສົ່ງອອກອາຫານ ແລະ ເຄື່ອງດື່ມໄປຍັງສະຫະລັດ ອາເມລິກາ ທີ່ບັນດາບໍລິສັດຕ້ອງໄດ້ປະຕິບັດໃຫ້ສອດຄ່ອງພາຍໃນປີ 2016.

<u>**16 ກໍລະກົດ 2016: ຂໍ້ກຳນົດໃໝ່ກ່ຽວກັບການຕິດສະຫຼາກ**</u>

ເມື່ອບໍ່ດົນມານີ້ ອົງການຄຸ້ມຄອງອາຫານ ແລະ ຢາ ໄດ້ສຳເລັດ 02 ລະບຽບການໃໝ່ ທີ່ອອກຄຳສັ່ງໃຫ້ມີການປ່ຽນແປງອັນສຳຄັນ ຕໍ່ກັບ ສະຫຼາກຂໍ້ມູນໂພສະນາການສຳລັບອາຫານ, ເຄື່ອງດື່ມ, ແລະ ອາຫານເສີມ. ສະຫຼາກທີ່ບໍ່ຖືກຕ້ອງຕາມຂໍ້ກຳນົດ ເປັນສາເຫດຫຼັກ ທີ່ເຮັດໃຫ້ການນຳເຂົ້າສິນຄ້າຖືກກັກ. ບັນດາບໍລິສັດໃນລາວຄວນເລີ່ມການກວດສອບສະຫຼາກຂອງຕົນທັງໝົດຕັ້ງແຕ່ດຽວນີ້ ເພື່ອປະເມີນຄວາມສອດຄ່ອງກັບລະບຽບການໃໝ່ ແລະ ປັບປຸງສະຫຼາກໃໝ່ ເຊິ່ງຮຽກຮ້ອງໃຫ້ມີຂໍ້ມູນເພີ່ມເຕີມທາງດ້ານເຕັກນິກ ແລະ ອື່ນໆ ແລະ ຈະຕ້ອງໄດ້ແກ້ໄຂໃຫ້ສຳເລັດພາຍໃນສອງປີ ນັບຈາກວັນທີ 26 ກໍລະກົດ 2016.

<u>**17 ກັນຍາ 2016: ລະບຽບການໃໝ່ເພື່ອຄວບຄຸມປ້ອງກັນສະບຽງອາຫານຂອງມະນຸດ**</u>

ກົດໝາຍກ່ຽວກັບຄວາມປອດໄພທາງດ້ານອາຫານສະບັບໃໝ່ ປີ 2011(The 2011 FDA Food Safety Modernization Act, “FSMA”) ຮຽກຮ້ອງໃຫ້ໂຮງງານອາຫານທີ່ຈົດທະບຽນສ່ວນໃຫຍ່ ຂຽນ ແລະ ຈັດຕັ້ງປະຕິບັດ ແຜນຄວາມປອດໄພຂອງອາຫານພາຍໃນເດືອນກັນຍາປີນີ້. ເຖິງແມ່ນວ່າ ຫຼາຍໂຮງງານມີແຜນຄວາມປອດໄພຂອງອາຫານເຊັ່ນ HACCP, ISO 22000, ຫຼື BRC ກໍ່ຕາມ ແຕ່ວ່າການຂຽນ ແລະ ຈັດຕັ້ງປະຕິບັດແຜນຄວາມປອດໄພທາງດ້ານອາຫານ ຕາມລະບຽບການຂອງອົງການຄຸ້ມຄອງອາຫານ ແລະ ຢາ ແມ່ນຂໍ້ກຳນົດໃໝ່ ແລະ ແຕກຕ່າງຈາກເກົ່າ.

**1 ຕຸລາ 2016: ຂໍ້ກຳນົດການຕໍ່ທະບຽນໂຮງງານອາຫານ ຂອງ ອົງການຄຸ້ມຄອງອາຫານ ແລະ ຢາ**

FSMA ຮຽກຮ້ອງໃຫ້ໂຮງງານອາຫານ ຕໍ່ທະບຽນກັບອົງການຄຸ້ມຄອງອາຫານ ແລະ ຢາ ໃນລະຫວ່າງ ວັນທີ 1 ຕຸລາ 2016 ເຖິງ 31 ທັນວາ 2016. ການຂົນສົ່ງອາຫານຈາກ ສປປ ລາວ ມາຍັງສະຫະລັດອາເມລິກາ ອາດຈະຖືກປະຕິເສດ ຖ້າຫາກວ່າໂຮງງານອາຫານບໍ່ໄດ້ຮັບການຕໍ່ທະບຽນຢ່າງຖືກຕ້ອງ.

ຖ້າຫາກຜູ້ສົ່ງອອກ ຈາກ ສປປ ລາວ ມີຄຳຖາມກ່ຽວກັບຂໍ້ກຳນົດຂ້າງເທິງ, ທີມງານຊ່ຽວຊານດ້ານນິຕິກຳຂອງບໍລິສັດ Registrar Corp ຍິນດີໃຫ້ການບໍລິການຜ່ານຫຼາຍພາສາ. ບໍລິສັດ Registrar Corp ສາມາດ:

- ກວດກາ ແລະ ອອກແບບສະຫຼາກໃໝ່ ໃຫ້ສອດຄ່ອງກັບລະບຽບສະຫຼາກໃໝ່ ທີ່ຮຽກຮ້ອງໂດຍອົງການຄຸ້ມຄອງອາຫານ ແລະ ຢາ;
- ສ້າງ ຫຼື ກວດກາແຜນຄວາມປອດໄພຂອງອາຫານ ແລະ ເອກະສານຄວາມປອດໄພຂອງອາຫານ ເພື່ອຮັບປະກັນຄວາມສອດຄ່ອງກັບລະບຽບການ.
- ຕໍ່ທະບຽນໂຮງງານຢ່າງຖືກຕ້ອງ ໂດຍອີງຕາມລະບຽບອົງການຄຸ້ມຄອງອາຫານ ແລະ ຢາ ແລະ ໃຫ້ບໍລິການໃນນາມຕົວແທນ ເພື່ອປະສານງານກັບອົງການຄຸ້ມຄອງອາຫານ ແລະ ຢາ ຂອງ ສະຫະລັດອາເມລິກາ.

ສຳລັບຂໍ້ມູນເພີ່ມເຕີມ, ຕິດຕໍ່ທີ່ປຶກສາທາງດ້ານນິຕິກຳຂອງພວກເຮົາໄດ້ທີ່ ໂທ +1-757-224-0177 ຫຼື ນຳໃຊ້ "ການຊ່ວຍເຫຼືອອອນລາຍ" ທີ່ www.registrarcorp.com.

ດ້ວຍຄວາມເຄົາລົບ ແລະ ນັບຖື,

(ລາຍເຊັນ)

ນ. ໂຄລີ ແອນເດີຊັນ

ຫົວໜ້າຝ່າຍພົວພັນອຸດສາຫະກຳ ແລະ ລັດຖະບານ

ໝາຍເຫດ: ສະມາຄົມການຄ້າສາກົນວໍຊິງຕັນ (Washington International Trade Association, WITA) ຂອງ ອົງການຄຸ້ມຄອງອາຫານ ແລະ ຢາ ຈະຈັດງານ ທີ່ ວໍຊິງຕັນໃນວັນທີ 25 ຕຸລາ 2016. ທ່ານຈະໄດ້ຮັບຂໍ້ມູນລາຍລະອຽດກ່ຽວກັບງານດັ່ງກ່າວ ໃນໄວໆນີ້.